ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນແລະຄຸ້ມຄອງວິສາຫະກິດ

ເລກທີ 1233/ກທຄວ.ອຄ

ນະຄອນຫລວງວຽງຈັນ,ວັນທີ 13 ກັນຍາ 2019

ເຖິງ: - ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະການຄ້າ ຂັ້ນແຂວງ;

- ເຈົ້າໜ້າທີ່ທະບຽນວິສາຫະກິດ, ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ;

ເລື່ອງ: ວິທີການຍ້າຍຂໍ້ມູນວິສາຫະກິດທີ່ບໍ່ເຄື່ອນໄຫວທຸລະກິດ ອອກຈາກຖານຂໍ້ມູນວິສາຫະກິດ ໄປໄວ້ຢູ່ໃນບັນຊີວິສາຫະກິດທີ່ບໍ່ມີຕົວຕົນ

- ອີງຕາມບົດແນະນຳ ກ່ຽວກັບມາດຕະການຕໍ່ການລະເມີດຂອງວິສາຫະກິດ ພາຍຫລັງຂຶ້ນທະບຽນວິສາຫະກິດ ສະບັບເລກທີ 1170/ກທຄວ.ອຄ, ລົງວັນທີ 05 ກັນຍາ 2019.

ເພື່ອເຮັດໃຫ້ຂໍ້ມູນຂອງວິສາຫະກິດ ສອດຄ່ອງກັບສະພາບຄວາມເປັນຈິງ, ແກ້ໄຂຊ່ອງຫວ່າງຄວາມຜິດພາດ ແລະຮັບປະກັນໄດ້ຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ, ກົມທະບຽນ ແລະຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກຳ ແລະການຄ້າ), ແນະນຳວິທີການຍ້າຍຂໍ້ມູນວິສາຫະກິດທີ່ບໍ່ເຄື່ອນໄຫວທຸລະກິດ ອອກຈາກຖານຂໍ້ມູນວິສາຫະກິດ ໄປໄວ້ຢູ່ໃນບັນຊີວິສາຫະກິດທີ່ບໍ່ມີຕົວຕົນ ຕາມວັກໜຶ່ງໃນຂໍ້2.1 ຂອງບົດແນະນຳ ສະບັບເລກທີ 1170/ກທຄວ.ອຄ, ລົງວັນທີ 05 ກັນຍາ 2019 ຕາມຂັ້ນຕອນດັ່ງນີ້:

1. ເຂົ້າລະບົບໂປຣແກຣມທະບຽນວິສາຫະກິດ ຈາກນັ້ນພິມລະຫັດຂອງຫົວໜ່ວຍວິສາຫະກິດທີ່ຈະຍ້າຍອອກຈາກຖານຂໍ້ມູນ ໃສ່ໃນບ່ອນຊອກຂໍ້ມູນ;
2. ກົດແກ້ໄຂ, ກົດເຄື່ອງໝາຍ ✓ ໃສ່ບ່ອນລົບລ້າງທະບຽນ, ພິມຄຳວ່າ (AEL) ໃສ່ບ່ອນໝາຍເຫດ ແລະ ກົດ Save. (ລາຍລະອຽດໄດ້ມີຄູ່ມືແນະນຳຄັດຕິດມາພ້ອມນີ້).

ແຈ້ງມາເພື່ອຊາບ ແລະຈັດຕັ້ງປະຕິບັດ.

ຫົວໜ້າກົມ

ດຣ.ສົມພອງ ພຽນພົມດ

ຕິດຕໍ່ພົວພັນ:

- ເນັ່ງຍາງ 02022516330; ພອນເທວາ 02093210627

Scanned with CamScanner